**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1897 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 24 ຕຸລາ 2023

# ຂໍ້ຕົກລົງ

## ວ່າດ້ວຍການບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ

- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ສະບັບເລກທີ 1687/ກອຫ.ສຄ, ລົງວັນທີ 12 ຕຸລາ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານດັ່ງກ່າວໃຫ້ດຳເນີນຢ່າງຖືກຕ້ອງຕາມຫຼັກວິຊາການ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ກ່ຽວກັບເຄມີ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ການບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ແມ່ນການສະໜອງຂໍ້ມູນຄວາມປອດໄພ, ສ້າງຄວາມເຂັ້ມແຂງດ້ານວິຊາການ, ກວດສອບ, ວິໄຈ, ຢັ້ງຢືນດ້ານເຕັກນິກ, ປະເມີນຄວາມສ່ຽງ, ສ້າງແຜນປ້ອງກັນ ແລະ ແກ້ໄຂອຸປະຕິເຫດ ກ່ຽວກັບເຄມີ ເປັນຕົ້ນ ພາຊະນະບັນຈຸ, ການຫຸ້ມຫໍ່, ການຕິດສະຫຼາກ, ການເກັບຮັກສາ, ການຂົນສົ່ງ, ການບຳບັດ ແລະ ການກຳຈັດເຄມີ ແລະ ສິ່ງເສດເຫຼືອເຄມີອັນຕະລາຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ** ໝາຍເຖິງ ເອກະສານອະນຸຍາດໃຫ້ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

2. **ແບບພິມ ສ1** ໝາຍເຖິງ ແບບພິມການປະກອບຂໍ້ມູນ ເພື່ອພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

3. **ແບບພິມ ສ2** ໝາຍເຖິງ ແບບພິມການປະກອບຂໍ້ມູນ ການສ້າງບົດວິພາກເສດຖະກິດ-ເຕັກນິກ;

4. **ແບບພິມ ສ3** ໝາຍເຖິງ ແບບພິມການປະກອບຂໍ້ມູນ ເພື່ອພິຈາລະນາຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ຢູ່ ສປປ ລາວ.

## ໝວດທີ 2

## ການດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ

**ມາດຕາ 5 ເງື່ອນໄຂການອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຖານະເປັນນິຕິບຸກຄົນ;

2. ຮັບປະກັນທາງດ້ານທຶນຮອນ, ມີເຕັກນິກ ແລະ ວັດຖຸປະກອນ ໃນການສາທິດ ກ່ຽວກັບຄວາມປອດໄພເຄມີ;

3. ສະຖານທີ່ ຫຼື ບ່ອນເຮັດວຽກທີ່ແນ່ນອນ ແລະ ເໝາະສົມ;

4. ມີພະນັກງານ ຢ່າງໜ້ອຍ ໜຶ່ງ ທ່ານ ທີ່ມີວຸດທິການສຶກສາປະລິນຍາຕີຂຶ້ນໄປ ໃນສາຂາວິຊາທີ່ກ່ຽວຂ້ອງກັບເຄມີ ແລະ ມີປະສົບການ ກ່ຽວກັບວຽກງານເຄມີ ມາແລ້ວຢ່າງໜ້ອຍ ສາມ ປີ.

**ມາດຕາ 6 ການຂໍອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ຜູ້ທີ່ມີຈຸດປະສົງ ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ຍື່ນເອກະສານຕໍ່ກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມ ສ1 ຂອງກົມອຸດສາຫະກຳ;

2. ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມ ສ2 ຂອງກົມອຸດສາຫະກຳ;

3. ໃບຢັ້ງຢືນຖານະການເງິນຈາກທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ;

4. ສຳເນົາໃບທະບຽນວິສາຫະກິດ;

5. ສຳເນົາໃບຢັ້ງຢືນສິດນຳໃຊ້ທີ່ດິນ ຫຼື ສັນຍາເຊົ່າ;

6. ສຳເນົາໃບປະກາສະນິຍະບັດປະລິນຍາຕີຂຶ້ນໄປ ໃນສາຂາວິຊາທີ່ກ່ຽວຂ້ອງກັບເຄມີ ແລະ ໃບຢັ້ງຢືນປະສົບການ ຢ່າງໜ້ອຍ ສາມ ປີ ກ່ຽວກັບວຽກງານເຄມີ.

**ມາດຕາ 7 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ພາຍຫຼັງທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ກົມອຸດສາຫະກຳ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີເອກະສານ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ກົມອຸດສາຫະກຳ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ຫ້າ ວັນລັດຖະການ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ.

ໃນກໍລະນີ ທີ່ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ກົມອຸດສາຫະກຳ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບ ພາຍໃນ ສິບ ວັນລັດຖະການ.

**ມາດຕາ 8 ອາຍຸ ແລະ ການຕໍ່ອາຍຸ ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ມີອາຍຸ ສອງ ປີ ແລະ ສາມາດຕໍ່ໄດ້ ແຕ່ຕ້ອງຍື່ນເອກະສານຂໍຕໍ່ອາຍຸ ກ່ອນວັນໝົດອາຍຸ ສາມສິບ ວັນ.

ການຂໍຕໍ່ອາຍຸ ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ຍື່ນຕໍ່ກົມອຸດສາຫະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມ ສ3 ຂອງກົມອຸດສາຫະກຳ;
2. ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ສະບັບຕົ້ນ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາໃບຢັ້ງຢືນມອບພັນທະອາກອນ;
5. ບົດລາຍງານການເຄື່ອນໄຫວດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃນໄລຍະ ສອງປີ ຜ່ານມາ.

**ມາດຕາ 9 ການໂຈະໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ດຳເນີນທຸລະກິດສະເໜີໂຈະດ້ວຍຄວາມສະໝັກໃຈ;
2. ໂຈະພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຊຶ່ງຜູ້ດຳເນີນທຸລະກິດຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນກຳນົດເວລາ ສາມ ເດືອນ;
3. ນຳໃຊ້ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໝົດອາຍຸ;
4. ນຳໃຊ້ເຄມີອັນຕະລາຍ ເຂົ້າໃນການສາທິດໃນເວລາໃຫ້ຄຳປຶກສາ ໂດຍບໍ່ໄດ້ຮັບອະນຸຍາດ;
5. ເຄື່ອນໄຫວດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ.

**ມາດຕາ 10 ການຍົກເລີກໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ໃບອະນຸຍາດດຳເນີນທຸລະກິດບໍລິການຄວາມປອດໄພ ກ່ຽວກັບເຄມີ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ດຳເນີນທຸລະກິດສະເໜີຍົກເລີກດ້ວຍຄວາມສະໝັກໃຈ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນກຳນົດເວລາ ສາມ ເດືອນ ພາຍຫຼັງທີ່ຖືກສັ່ງໂຈະ;
3. ຍັງສືບຕໍ່ເຄື່ອນໄຫວດຳເນີນທຸລະກິດ ໃນເວລາທີ່ຖືກສັ່ງໂຈະ;
4. ມີຄຳຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດຳເນີນທຸລະກິດ.

## ໝວດທີ 3

## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ

**ມາດຕາ 11 ສິດ ຂອງຜູ້ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ຜູ້ດຳເນີນທຸລະກິດບໍລິການຄວາມປອດໄພ ກ່ຽວກັບເຄມີ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດ ຕາມຂອບເຂດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

2. ໃຫ້ຄຳປຶກສາ, ແນະນຳ ແລະ ກວດສອບ ພ້ອມທັງຢັ້ງຢືນຄວາມຖືກຕ້ອງຂອງມາດຕະການຄຸ້ມຄອງຄວາມປອດໄພກ່ຽວກັບເຄມີໃຫ້ຜູ້ໃຊ້ບໍລິການ;

3. ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານຂອງຕົນ ໃນດ້ານເຕັກນິກວິຊາການຄວາມປອດໄພ ກ່ຽວກັບເຄມີ;

4. ເຂົ້າຮ່ວມແລກປ່ຽນບົດຮຽນ ແລະ ປະສົບການ ວຽກງານຄວາມປອດໄພ ກ່ຽວກັບເຄມີ ກັບພາກລັດ ແລະ ພາກເອກະຊົນ;

5. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ ແລະ ລະບຽບການ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 12 ພັນທະຂອງຜູ້ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

1. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຈາກການດຳເນີນທຸລະກິດຂອງຕົນ;

2. ປະຕິບັດພັນທະອາກອນ ຕາມກົດໝາຍ ແລະ ລະບຽບການ;

3. ຕ້ອງຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານ ດ້ານເຕັກນິກວິຊາການຄວາມປອດໄພ ກ່ຽວກັບເຄມີ;

4. ສະຫຼຸບລາຍງານການເຄື່ອນໄຫວດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ກົມອຸດສາຫະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຊາບ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4

## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ເກີນຂອບເຂດສິດ ແລະ ໜ້າທີ່ ຕໍ່ກັບວຽກງານບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

3. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມແປງ;

4. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 14 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ຫ້າມຜູ້ດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງເອກະສານ, ປິດບັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ເຄື່ອນໄຫວທຸລະກິດ ໂດຍບໍ່ສອດຄ່ອງກັບໃບອະນຸຍາດດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;
4. ນໍາໃຊ້ເຄມີອັນຕະລາຍ ເຂົ້າໃນການສາທິດໃນເວລາໃຫ້ຄໍາປຶກສາ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໃຫ້ສິນບົນ ແກ່ເຈົ້າໜ້າທີ່-ພະນັກງານ;
6. ຕໍ່ອາຍຸໃບອະນຸຍາດດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ກາຍມື້ໝົດອາຍຸ;
7. ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ທີ່ໝົດອາຍຸ;
8. ພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕໍາແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ຜູ້ທີ່ກ່ຽວຂ້ອງ;
2. ທວງເອົາ, ຂໍເອົາ, ຮັບສິນບົນ, ລໍາອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;
3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກໍາທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງຜູ້ດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;
4. ເປີດເຜີຍເອກະສານທາງລັດຖະການ, ຂໍ້ມູນ ແລະ ຄວາມລັບທາງດ້ານທຸລະກິດ ຂອງຜູ້ດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໂດຍບໍ່ໄດ້ຮັບອະນຸຍາດ;
5. ພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 5

## ການຄຸ້ມຄອງວຽກງານດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ

**ມາດຕາ 16 ການຄຸ້ມຄອງວຽກງານດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກໍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກໍາ**

ກົມອຸດສາຫະກໍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານດໍາເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;

3. ພິຈາລະນາ ອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

4. ໃຫ້ຄຳແນະນຳ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

5. ຕິດຕາມ, ກວດກາ ການດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃນຂອບເຂດທົ່ວປະເທດ;

6. ຮັບ ແລະ ພິຈາລະນາຄຳສະເໜີຈາກປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງກ່ຽວກັບການເຄື່ອນໄຫວທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນທຸລະກິດບໍລິການຄວາມປອດໄພ ກ່ຽວກັບເຄມີ ໃຫ້ຂັ້ນເທິງຊາບ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດ ແຂວງ, ນະຄອນຫຼວງ;

2. ຮັບ ແລະ ກວດກາຄວາມຖືກຕ້ອງ ເອກະສານຂໍອະນຸຍາດດຳເນີນທຸລະກິດ ຫຼື ຂໍຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ແລ້ວນຳສົ່ງໃຫ້ກົມອຸດສາຫະກຳ ເພື່ອພິຈາລະນາ;

3. ສະເໜີກົມອຸດສາຫະກຳ ພິຈາລະນາ ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ;

4. ຊຸກຍູ້, ສົ່ງເສີມ ແລະ ແນະນຳ ກ່ຽວກັບທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ແກ່ຜູ້ດຳເນີນທຸລະກິດ;

5. ຕິດຕາມ, ກວດກາ ການດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ທີ່ສ້າງຕັ້ງຂຶ້ນຢູ່ ແຂວງ, ນະຄອນຫຼວງ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ກົມອຸດສາຫະກຳ ປະຈຳປີ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພເຄມີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດ ເມືອງ, ນະຄອນ;

2. ຊຸກຍູ້, ສົ່ງເສີມ ແລະ ແນະນຳ ກ່ຽວກັບທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ໃຫ້ແກ່ຜູ້ດຳເນີນທຸລະກິດ;

3. ຕິດຕາມ, ກວດກາ ການດຳເນີນທຸລະກິດບໍລິການທີ່ປຶກສາຄວາມປອດໄພ ກ່ຽວກັບເຄມີ ທີ່ຕັ້ງຢູ່ ເມືອງ, ນະຄອນ;

4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນທຸລະກິດບໍລິການທີ່ປຶກສາ ຄວາມປອດໄພ ກ່ຽວກັບເຄມີ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ປະຈຳປີ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ບົດບັນຍັດສຸດທ້າຍ

### ມາດຕາ 20 ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ເປັນເຈົ້າການປະສານສົມທົບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 21 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ລົງໃນຈົດໝາຍເຫດທາງລັດຖະ ການ.

ລັດຖະມົນຕີ

ບຸນເຖິງ ດວງສະຫວັນ